ອົງການໄອຍະການ
ປະຊາຊົນ ສູງສຸດ
ເລກທີ: 098 ອອປສ
ວັນທີ: 29/1/13

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------------

ສະພາແຫ່ງຊາດ
ຫ້ອງວ່າການ

ເລກທີ 029/ຫສຊ/ກຂໝ

ນະຄອນຫລວງວຽງຈັນ, ວັນທີ 28/01/13

## ແຈ້ງການ

ຮຽນ: ທ່ານ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ

ເລື່ອງ: ກະກຽມເນື້ອໃນ ເພື່ອລາຍງານຕໍ່ກອງປະຊຸມຕິດຕາມກວດກາການຈັດຕັ້ງປະຕິບັດ ລັດຖະທຳມະນູນ ແລະກົດໝາຍ

ອີງຕາມພາລະບົດບາດຂອງກຳມາທິການກົດໝາຍທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍ ສະພາແຫ່ງຊາດ

ອີງຕາມແຜນການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍຂອງກຳມາທິການກົດໝາຍ ສະບັບເລກທີ 11/ກກໝ, ລົງວັນທີ 22 ມັງກອນ 2013

ຫ້ອງວ່າການສະພາແຫ່ງຊາດ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ເພື່ອຮັບປະກັນໃຫ້ແກ່ການດຳເນີນກອງປະຊຸມຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະກົດໝາຍ ຊຶ່ງຈະຈັດຂຶ້ນໃນວັນທີ 5 ກຸມພາ 2013 ໃຫ້ໄດ້ຮັບຜົນສຳເລັດຢ່າງຈົບງາມ ຈຶ່ງສະເໜີມາຍັງທ່ານ ກະກຽມບົດລາຍງານໃນຂົງເຂດຄວາມຮັບຜິດ ຊອບຂອງຕົນ ໂດຍລົງເລິກບາງບັນຫາດັ່ງນີ້:

ລາຍງານກ່ຽວກັບການປະຕິບັດວຽກງານໃນໄລຍະໜຶ່ງປີຜ່ານມາ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນທີ່ກົດໝາຍໄດ້ກຳນົດໄວ້ ໂດຍເລັ່ງໃສ່ການປະຕິບັດໜ້າທີ່ຂອງພະນັກ ງານສອບສວນ ແລະ ການສັ່ງຟ້ອງ ທີ່ເຫັນວ່າມີຄວາມຜິດພາດ ແລະ ຄວາມຜິດພາດນັ້ນເນື່ອງມາຈາກສາເຫດອັນໃດ?;

ພາຍຫຼັງສຳເລັດການກະກຽມເນື້ອໃນບົດລາຍງານແລ້ວ ກະລຸນາສົ່ງໃຫ້ກົມກົດໝາຍ ບໍ່ໃຫ້ກາຍວັນທີ 2 ກຸມພາ 2013. ສ່ວນບັດເຊີນການເຂົ້າຮ່ວມປະຊຸມນັ້ນ ຈະສົ່ງມາຕ່າງຫາກ

ດັ່ງນັ້ນ ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຈິດໃຈດັ່ງກ່າວດ້ວຍ.

ຮ.ນ. ຫົວໜ້າຫ້ອງວ່າການສະພາແຫ່ງຊາດ

ສະພາແຫ່ງຊາດ
ຫ້ອງວ່າການ

ຄຳແພງ ວິລະພັນ